**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ

ເລກທີ 1177/ຫສນຍ

ນະຄອນຫຼວງວຽງຈັນ, ວັນທີ 15. ກັນຍາ.2021

# ແຈ້ງການ

**ຮຽນ:** - ບັນດາທ່ານ ລັດຖະມົນຕີ, ຫົວໜ້າອົງການທຽບເທົ່າ ທີ່ນັບຖື.
- ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານເຈົ້າແຂວງທົ່ວປະເທດ ທີ່ນັບຖື.

**ເລື່ອງ:** ການສືບຕໍ່ປະຕິບັດມາດຕະການປ້ອງກັນ, ຄວບຄຸມ ແລະ ສະກັດກັ້ນການລະບາດຂອງພະຍາດ COVID-19 ໃນໄລຍະ ວັນທີ 16-30 ກັນຍາ 2021.

- ອີງຕາມ ດໍາລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ສະບັບເລກທີ 93/ນຍ, ລົງວັນທີ 03 ມີນາ 2017;
- ອີງຕາມ ຄໍາສັ່ງຂອງທ່ານ ນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021;
- ອີງຕາມ ການຊີ້ນໍາ ຂອງທ່ານ ນາຍົກລັດຖະມົນຕີ ລົງວັນທີ 15 ກັນຍາ 2021.

ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງມາຍັງທ່ານ ຊາບວ່າ: **ອີງຕາມການປະເມີນສະພາບການລະບາດ ແລະ ການຈັດຕັ້ງປະຕິບັດມາດຕະການຕ່າງໆ ໃນຄໍາສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021, ແຈ້ງການ ສະບັບເລກທີ 1094/ຫສນຍ, ລົງວັນທີ 31 ສິງຫາ 2021 ແລະ ມາດຕະການຕ່າງໆ ທີ່ຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດ ຂອງພະຍາດ COVID-19 ຂັ້ນສູນກາງໄດ້ວາງອອກ ເຫັນວ່າ ໂດຍລວມແລ້ວ ທຸກການຈັດຕັ້ງ, ທຸກຂັ້ນ ຕະຫຼອດຮອດທົ່ວປວງຊົນລາວທັງຊາດ ລ້ວນແຕ່ໄດ້ຈັດຕັ້ງປະຕິບັດ ຢ່າງເປັນຂະບວນກວ້າງຂວາງ ແລະ ມີຜົນສໍາເລັດໃນຫຼາຍດ້ານ. ຢ່າງໃດກໍຕາມ ມາຮອດວັນທີ 15 ກັນຍາ 2021 ສະພາບການລະບາດ ຂອງພະຍາດ COVID-19 ຢູ່ ສປປ ລາວ ແມ່ນມີທ່າອ່ຽງເພີ່ມຂຶ້ນ ແລະ ຈະກ້າວສູ່ລະດັບ 2. ພ້ອມດຽວກັນນັ້ນ ຢູ່ບາງແຂວງ ຈະກ້າວສູ່ລະດັບ 3 ເຊັ່ນ: ແຂວງຈໍາປາສັກ, ຄໍາມ່ວນ, ສະຫວັນນະເຂດ ແລະ ນະຄອນຫຼວງວຽງຈັນ, ເຊິ່ງທ້ອງຖິ່ນເຫຼົ່ານີ້ ເຖິງແມ່ນວ່າ ການຕິດເຊື້ອທີ່ມາຈາກຕ່າງປະເທດໄດ້ຫຼຸດລົງກໍຕາມ, ແຕ່ການລະບາດໃນຊຸມຊົນ ແມ່ນຍັງແຜ່ລາມເປັນວົງກວ້າງ. ສາເຫດຕົ້ນຕໍ ຂອງການຕິດເຊື້ອໃນຊຸມຊົນ ແມ່ນການເດີນທາງໄປມາລະຫວ່າງທ້ອງຖິ່ນຕໍ່ທ້ອງຖິ່ນ ໂດຍສະເພາະໃນ ທ້ອງຖິ່ນທີ່ມີການລະບາດໃນຊຸມຊົນ ແລະ ການດໍາເນີນກິດຈະກໍາຕ່າງໆໃນສັງຄົມຢູ່ຫຼາຍບ່ອນ ຂອງການຈັດຕັ້ງ ແລະ ບຸກຄົນຈໍານວນໜຶ່ງ ບໍ່ທັນປະຕິບັດມາດຕະການຕ້ານ ແລະ ສະກັດກັ້ນພະຍາດ COVID-19 ໄດ້ຢ່າງຖືກຕ້ອງ ແລະ ເຂັ້ມງວດ. ສະນັ້ນ, ຈຶ່ງມີຄວາມຈໍາເປັນຕ້ອງໄດ້ເພີ່ມຄວາມເຂັ້ມງວດ ໃນການປະຕິບັດບັນດາມາດຕະການ ທີ່ໄດ້ລະບຸໄວ້ ໃນຄໍາສັ່ງສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021, ແຈ້ງການ ສະບັບເລກທີ 1094/ຫສນຍ, ລົງວັນທີ 31 ສິງຫາ 2021 ສໍາລັບໄລຍະ 15 ວັນຕໍ່ໜ້າ ໂດຍເລີ່ມແຕ່ເວລາ 00:00 ໂມງ ຂອງວັນທີ 16 ກັນຍາ ຫາ ເວລາ 24:00 ໂມງ ຂອງວັນທີ 30 ກັນຍາ 2021.**

**ສໍາລັບມາດຕະການຫ້າມ ແລະ ຜ່ອນຜັນ ແມ່ນໃຫ້ສືບຕໍ່ປະຕິບັດຕາມແຈ້ງການ ສະບັບເລກທີ 1094/ຫສນຍ, ລົງວັນທີ 31 ສິງຫາ 2021.**

**ສ່ວນມາດຕະການຜ່ອນຜັນໃໝ່, ໂດຍອີງໃສ່ຄວາມຮຽກຮ້ອງຕ້ອງການຂອງວຽກງານການສຶກສາ ແມ່ນເຫັນດີໃຫ້ປິດການຮຽນການສອນ ສໍາລັບການສຶກສາທຸກຂັ້ນ ທຸກສາຍ ແລະ ສືບຕໍ່ເລື່ອນການສອບເສັງຄັດເລືອກເຂົ້າຮຽນ**

ສາຍອາຊີວະສຶກສາ, ສ້າງຄູ, ການສຶກສາຊັ້ນສູງ ແລະ ມະຫາວິທະຍາໄລ ຢູ່ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ທີ່ມີການລະບາດໃນຊຸມຊົນ, ແຕ່ອະນຸຍາດໃຫ້ໂຮງຮຽນກິນນອນ ທີ່ບໍ່ມີການເຄື່ອນຍ້າຍນັກຮຽນ-ນັກສຶກສາ ແລະ ພະນັກງານຄູ-ອາຈານ ດຳເນີນການຮຽນ-ການສອນໄດ້ ໂດຍໂຮງຮຽນຕ້ອງປະຕິບັດມາດຕະການປ້ອງກັນ ແລະ ຄວບຄຸມການລະບາດຂອງພະຍາດ COVID-19 ຢ່າງເຂັ້ມງວດ ແລະ ໄດ້ຮັບການອະນຸຍາດຈາກຄະນະສະເພາະກິດຂັ້ນແຂວງ, ນະຄອນຫຼວງວຽງຈັນ.

ສຳລັບມາດຕະການຕໍ່ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການແຜ່ລະບາດຂອງພະຍາດ COVID-19 ທີ່ລັດຖະບານ, ຄະນະສະເພາະກິດ, ກະຊວງ-ອົງການຂັ້ນສູນກາງ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ວາງອອກ ແມ່ນໃຫ້ດຳເນີນຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ ຕາມແຕ່ກໍລະນີ ໜັກ ຫຼື ເບົາ.

ມອບໃຫ້ບັນດາກະຊວງ, ອົງການທຽບເທົ່າ, ອົງການປົກຄອງທ້ອງຖິ່ນ ແລະ ຄະນະສະເພາະກິດທຸກຂັ້ນ ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຈ້ງການສະບັບນີ້ ໃຫ້ຖືກຕ້ອງ ແລະ ເຂັ້ມງວດ ສອດຄ່ອງກັບສະພາບຕົວຈິງ ຂອງແຕ່ລະປ່ອນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ,

ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ຄຳເຈນ ວົງໂພສີ

<u>ປ່ອນປາສົ່ງ:</u>

| | |
|---|---|
| 1. ນາຍົກ-ຮອງນາຍົກລັດຖະມົນຕີ | 04 ສະບັບ |
| 2. ອົງການຂົງເຂດ ພັກ-ລັດ | ປ່ອນລະ 01 ສະບັບ |
| 3. ສູນກາງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ | ປ່ອນລະ 01 ສະບັບ |
| 4. ຄະນະເລຂາທິການສະພາແຫ່ງຊາດ | 01 ສະບັບ |
| 5. ຄະນະ ຫສນຍ, ທ່ານລະ | 01 ສະບັບ |
| 6. ສຳເນົາ | 01 ສະບັບ |